

# ຈົ່ງ ເປັນນັກເດີນທາງ ທີ່ຊ່ວຍເຫຼືອເດັກ ໃຫ້ມີຄວາມປອດໄພ

ເດັກທີ່ເຮັດວຽກ ແລະ ອາໄສຢູ່ສະຖານທີ່ບໍລິການການທ່ອງທ່ຽວ ທີ່ມີຄວາມສ່ຽງເປັນພິເສດຕໍ່ການຖືກລ່ວງລະເມີດທາງດ້ານຮ່າງກາຍ, ຈິດໃຈ ແລະ ທາງເພດ.

ນັກເດີນທາງສາມາດຊ່ວຍສ້າງສະພາບແວດລ້ອມການທ່ອງທ່ຽວໃຫ້ ປອດໄພ ສໍາລັບເດັກ – ບາດກ້າວນ້ອຍໆ ແຕ່ນໍາໄປສູ່ສິ່ງທີ່ຍິ່ງໃຫຍ່ ເພື່ອຊ່ວຍປົກປ້ອງເດັກຈາກ ການຖືກລ່ວງລະເມີດ ແລະ ການຖືກຂູດຮີດ.

**ຖ້າທ່ານພົບເຫັນເດັກ ທີ່ທ່ານເຊື່ອວ່າຕົກ ຢູ່ໃນຄວາມສ່ຽງທີ່ຈະຖືກລ່ວງລະເມີດ, ກະລຸນາໂທ** **1191** ຫຼື **1362**

LAOS Simply Beautiful · Australian Aid · THE CODE .ORG · UNODC · World Vision

## ບາດກ້າວນ້ອຍໆ ແຕ່ນຳໄປສູ່ສິ່ງທີ່ຍິ່ງໃຫຍ່

# ທາງເລືອກທີ່ທ່ານເຮັດ ສາມາດສົ່ງຜົນກະທົບທີ່ດີ ໂດຍກົງຕໍ່ຊີວິດຂອງເດັກ.

### ວິທີການປະຕິບັດທີ 1

ຖ້າທ່ານສົງໄສວ່າເດັກຈະຖືກລ່ວງລະເມີດ, ກະລຸນາໂທ **1191** ຫຼື **1362** ທັນທີ.

### ວິທີການປະຕິບັດທີ 2

ແທນທີ່ຈະໃຫ້ເງິນໂດຍກົງກັບເດັກຂໍທານ ຫຼື ເດັກຂາຍອາຫານ ຫຼື ເຄື່ອງທີ່ລະນຶກ, ໃຫ້ຊື້ຈາກບັນດາທຸລະກິດທ້ອງຖິ່ນ ແລະ ວິສາຫະກິດສັງຄົມທີ່ສະໜັບສະໜູນຄອບຄົວ ແລະ ຊຸມຊົນ, ຫຼື ບໍລິຈາກໃຫ້ແກ່ມູນນິທິຊ່ວຍເຫຼືອເດັກທີ່ມີຊື່ສຽງ.

### ວິທີການປະຕິບັດທີ 3

ເລືອກເອົາບັນດາໂຮງແຮມ ແລະ ທຸລະກິດທີ່ປະຕິບັດມາດຕະຖານການປົກປ້ອງເດັກ.

### ວິທີການປະຕິບັດທີ 4

ກະລຸນາຢ່າສະໜັບສະໜູນ 'ການທ່ອງທ່ຽວເດັກກຳພ້າ'. ການລົງຢ້ຽມຢາມ ແລະ ອາສະໝັກກ່ຽວກັບການດູແລເດັກຢູ່ໃນສະຖາບັນ ສາມາດເປັນອັນຕະລາຍຕໍ່ການເປັນຢູ່ທີ່ດີຂອງເດັກລວມທັງດ້ານຈິດໃຈ ແລະຮ່າງກາຍ. ຄວນໃຫ້ສະໜັບສະໜູນບັນດາອົງກອນ ແລະ ສ້າງໃຫ້ມີຄວາມຄິດລິເລີ່ມທີ່ສາມາດຊ່ວຍໃຫ້ເດັກໄດ້ຮັບການດູແລພາຍໃນຄອບຄົວ.

### ວິທີການປະຕິບັດທີ 5

ຕ້ອງຂໍອະນຸຍາດທຸກຄັ້ງ ກ່ອນຈະຖ່າຍຮູບເດັກ ແລະ ຫ້າມພາເດັກໄປບ່ອນອື່ນໂດຍບໍ່ໄດ້ຮັບອະນຸຍາດ ແລະ ການເບິ່ງແຍງຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກ.

### ວິທີການປະຕິບັດທີ 6

ການລ່ວງລະເມີດທາງເພດເດັກຖືວ່າຜິດກົດໝາຍ. ຫ້າມເຂົ້າຮ່ວມກິດຈະກຳທາງເພດກັບບຸກຄົນທີ່ມີອາຍຸຕ່ຳ ກ່ວາ 18 ປີ.

ເພື່ອຮຽນຮູ້ເພີ່ມຕື່ມວ່າທ່ານສາມາດເຮັດຫຍັງ ເພື່ອຊ່ວຍປົກປ້ອງເດັກຢູ່ໃນ ສປປ ລາວ, ກະລຸນາເຂົ້າເບິ່ງໃນເວັບໄຊທ໌ ໄດ້ທີ່

**www.childsafetourism.org**